# ການປູກ ຫວາຍຫອກ

**ການປູກຫວາຍເພື່ອເກັບກູ້ເສັ້ນ:**

ເນື່ອງຈາກວ່າຫວາຍຫອກເປັນຫວາຍທີ່ເກີດດ່ຽວ (ຕົ້ນດຽວ) ຖ້າຫາກຕັດເສັ້ນ ຫຼື ຍອດອອກແລ້ວຕົ້ນຫວາຍຈະຕາຍໄປ,ສະນັ້ນການປູກຫວາຍຊະນິດນີ້ຈຶ່ງແຕກຕ່າງຈາກຫວາຍຊະນິດອື່ນໃນດ້ານໄລຍະຫ່າງຂອງກຸ້ມ ແລະ ແຖວ ແລະ ຫວາຍຊະນິດນີ້ຈະພົບເຫັນຢູ່ໃນປ່າປະສົມເກືອບທຸກຂົງເຂດແຕ່ພາກກາງລົງພາກໄຕ້.



ເບ້ຍຫວາຍຫອກຢູ່ໃນທຳມະຊາດ

## 1. ປັດໃຈທີ່ຄວນເລືອກ

- ເນື້ອທີ່ສວນປູກຈະຕ້ອງເປັນປ່າເລົ່າແກ່ ຫຼື ປ່າປະສົມທີ່ມີແສງສະຫວ່າງຜ່ານລົງປະມານ 50 % ຫຼືຫຼາຍກວ່ານີ້.
- ລັກສະນະດິນຊາຍແກມດິນໜຽວ
- ມີຕົ້ນໄມ້ສຳລັບປີນປ່າຍ.

## 2. ເຕັກນິກໃນການປູກ

**ແນວພັນ ແລະ ລະດູການ:**

- ແນວພັນຕ້ອງມີອາຍຸ 9 — 12 ເດືອນ
- ລະດູທີ່ເໝາະສົມຕໍ່ການເພາະປູກເດືອນ5 (ພຶດສະພາ)

**ໄລຍະຫ່າງການປູກ:**

- ໄລຍະຫ່າງຂອງກຸ້ມ ແລະ ແຖວ 1X1 ມ ຫຼື 2x 2 ມ ລວມທັງສອງໄລຍະ (ປີທີ3)

**ການຂຸດຂຸມ ແລະ ປູກ:**

- ຂະໜາດຂອງຂຸມ 30X30X30 ຊັງຕີແມັດ ຫົດນ້ຳຫຼັງປູກແລ້ວ 1— 2 ຄັ້ງ / ອາທິດ (ຖ້າຝົນບໍ່ຕົກ ).

**ການບົວລະບັດຮັກສາ:**

ພາຍຫຼັງປູກຫວາຍຫອກແລ້ວ 3 ເດືອນໃຫ້ໃສ່

— ຝຸ່ນຄອກ:
ອັດຕາສ່ວນ 1 ກກ / ຕົ້ນ.

— ຝຸ່ນເຄມີ:
ໃສ່ອີກ 1 ຄັ້ງ
ໃນອັດຕາສ່ວນ 200 ກຼ / ຕົ້ນ,
(ສູດ 15-15-15 ຫຼື 18-64-00),
ພ້ອມທັງອະນາໄມບ່ອນທີ່ຢູ່ໄກ້ກັບຕົ້ນຫວາຍນັ້ນ.

ຫວາຍຫອກເມື່ອປູກໄດ້ອາຍຸ 3ປີມັນກໍ່ຈະເລີ້ມອອກດອກ ແລະ ໝາກ ແຕ່ເວລານີ້ໝາກຍັງບໍ່ທັນສົມບູນ ຖ້າຈະນຳເອົາໄປກ້າ ຫຼື ຂະຫຍາຍພັນຈະຕ້ອງໃຫ້ລຳຕົ້ນມີອາຍຸ 4 ປີຂຶ້ນໄປ.

ການປູກຫວາຍຫອກຄວນໄດ້ມີການຈັດການກັບພື້ນທີ່ໃຫ້ລະອຽດ ໝາຍຄວາມວ່າພື້ນທີ່ສາມາດເກັບກູ້ເສັ້ນຫວາຍໄດ້ຫຼາຍຄັ້ງຕິດຕໍ່ກັນ.

— ຫຼັງຈາກປູກຫວາຍຫອກອາຍຸໄດ້ 3 ປີ ໃຫ້ນຳເອົາເບ້ຍຫວາຍທີ່ກຽມໄວ້ ເຂົ້າມາປູກໃສ່ສັບຫວ່າງ

— ເຊິ່ງວ່າໄລຍະຫ່າງໃນການປູກຂອງກຸ້ມ ແລະ ແຖວແມ່ນ 2X 2 ແມັດ

— ໃນ 1 ເຮັກຕາມີຈຳນວນ 2.500 ຕົ້ນ.

## 3. ການເກັບກູ້ເສັ້ນຫວາຍ

ເສັ້ນຂອງຫວາຍທອກຈະແຂງແຮງ ແລະ ໝັ້ນໜຽວໃນເມື່ອອາຍຸ 7 — 10 ປີ ຈະມີຂະໜາດຄວາມຍາວສະເລ່ຍ 17.34 — 18.75 ແມັດ ຫຼື ອາດຈະຫຼາຍກວ່ານີ້ ຖ້າພື້ນທີ່ທີ່ເໝາະສົມ ແລະ ມີການດູແລຈັດການທີ່ດີ.




ຖ້າປູກຫວາຍທອກ:

1ຮຕ = 5,000 ຕົ້ນ = 5,000 ເສັ້ນ,

ຕົ້ນ1 = 1.5 ກກ ຫຼື 5,000ເສັ້ນ x1.5 ກກ= 7,5000 ກກ (ກິໂລກຣາມ)

ຖ້າຫາກຂາຍ:

ກິໂລກຣາມລະ 4,000 ກີບ ສາມາດສ້າງລາຍຮັບໄດ້ 30 ລ້ານກີບ/ຮຕ /9 ປີ.



ການຂາຍເສັ້ນຫວາຍ


ໂທ: 021 216080

ຂໍ້ມູນເຕັກນິກຕິດຕໍ່

ທ່ານ ຄຳພອນ ແສງດາລາ

ໂທ: 020 6861101

ໂທ: 021 740253

ຫຼື 021 740252

ໂທ: 021 740544

ຫຼື 021 740543



**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜູນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**


ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ ຫວາຍທອກ

***Calamus solitarius***

